# Wake up - the Lao Coffee Game

## ປຸກຄວາມຕື່ນເຕັ້ນຂອງທ່ານ ເມື່ອຫຼິ້ນເກມກາເຟລາວ - ບັນດາສະມາຊິກສະພາ

ລາຍລະອຽດຂອງບົດບາດທີ່ເປັນຕົວແທນໃນເກມ

**<u>ທ່ານ ນາງ ວັນມະນີ ແກ້ວວິໄລ- ຊາວສວນກາເຟ</u>**

*ຊາວສວນກາເຟເພດຍິງ ຈາກພາກໃຕ້ຂອງປະເທດລາວ*

ທ່ານ ນາງ ວັນມະນີ ແກ້ວວິໄລ ມີສວນກາເຟຕອນໜຶ່ງຊຶ່ງລາວປູກກາເຟເພື່ອສ້າງລາຍໄດ້ໃຫ້ແກ່ຄອບຄົວ. ນອກຈາກນັ້ນ, ລາວຍັງເປັນສະມາຊິກຂອງສະຫະກອນທ້ອງຖິ່ນ, ຊຶ່ງສ່ວນໃຫຍ່ແມ່ນລາວຂາຍກາເຟຜ່ານກຸ່ມສະຫະກອນ ແລະ ສ່ວນທີ່ເຫຼືອຂາຍໃຫ້ພໍ່ຄ້າຄົນກາງ ແລະ ຜູ້ເກັບຊື້ຂອງບໍລິສັດຕ່າງປະເທດ. ລາຍຮັບຈາກການຂາຍກາເຟບໍ່ຄົງທີ່ ຍ້ອນລາຄາກາເຟບໍ່ຄົງທີ່ ແລະ ພໍ່ຄ້າຄົນກາງວາງລາຄາກາເຟຕາມໃຈ(ແບບຢາກກົດລາຄາ) ໂດຍມີການຕໍ່ລອງແບບອີງໃສ່ລາຄາຕາມຕະຫຼາດຮັບຊື້. ລາຍຮັບຈາກການຂາຍກາເຟແມ່ນລາຍຮັບຕົ້ນຕໍຂອງຄອບຄົວລາວ, ເຖິງແນວໃດກໍ່ຕາມ, ລາວຍັງບໍ່ສາມາດຕໍ່ລອງລາຄາໄດ້ເພາະສ່ວນໃຫຍ່ຜູ້ຊື້ເປັນຜູ້ທີ່ກຳນົດ ລາຄາ. ໃນສະພາບການດັ່ງກ່າວ, ທ່ານ ນາງ ວັນມະນີ ແກ້ວວິໄລ ແມ່ນອີງໃສ່ລັດຖະບານທີ່ເຂັ້ມແຂງ ແລະການສະໜັບ ສະໜູນຂອງ NGOs ເພື່ອເຮັດໃຫ້ລາວມີອຳນາດໃນການຕໍ່ລອງລາຄາກາເຟ.

ໜ້າວຽກໃນສວນກາເຟສ່ວນໃຫຍ່ແມ່ນບໍ່ໄດ້ໃຊ້ເຄື່ອງມືທີ່ທັນສະໄໝ, ເຊິ່ງເຮັດໃຫ້ການເຮັດວຽກຊ້າ ແລະ ມີຄວາມຫຍຸ້ງຍາກ. ໃນຊ່ວງລະດູເກັບກ່ຽວກາເຟເປັນຊ່ວງທີ່ຕ້ອງການໃຊ້ແຮງງານຫຼາຍ, ສະນັ້ນ ລາວຈຶ່ງໄດ້ຈ້າງແຮງງານຍິງ ແລະ ຊາຍ ເພີ່ມເພື່ອມາຊ່ວຍວຽກໃນໄລຍະດັ່ງກ່າວ. ນອກຈາກການປູກກາເຟແລ້ວ, ລາວຍັງປູກຜັກໃນສວນທີ່ມີເນື້ອທີ່ 3 ເຮັກຕາ ແລະ ຍັງລ້ຽງເປັດໄກ່ຈຳນວນໜຶ່ງ ເພື່ອໃຫ້ພຽງພໍກັບຄວາມຕ້ອງການໃນການດຳລົງຊີວິດ. ການຜະລິດກະສິກຳຖືວ່າເປັນສິ່ງສຳຄັນທີ່ສຸດໃນການດຳລົງຊີວິດ, ສະນັ້ນການຜະລິດກະສິກຳ, ລາວຈຶ່ງອາໄສດິນທີ່ອຸດົມສົມບູນ, ການໄຫຼວຽນຂອງນ້ຳທີ່ດີ ແລະ ສະພາບອາກາດທີ່ເໝາະສົມ. ນອກຈາກວຽກງານກະສິກຳແລ້ວ, ນາງ ວັນມະນີ ຍັງຕ້ອງມີຄວາມຮັບຜິດຊອບວຽກເຮືອນການຊານ ແລະ ດູແລລູກໆຂອງລາວຕື່ມ. ຄວາມຫວັງຂອງລາວໃນອະນາຄົດ, ນອກຈາກຢາກໃຫ້ລູກມີການສຶກສາທີ່ດີແລ້ວ, ລາວຍັງຢາກມີລາຍຮັບຫຼາຍຂຶ້ນ ແລະ ໝັ້ນຄົງກວ່າເກົ່າ. ຄຽງຄູ່ນັ້ນຢາກໃຫ້ມີຜູ້ແບ່ງເບົາພາລະວຽກເຮືອນການຊານເພື່ອລຸດການແບກຫາບທັງວຽກເຮືອນການຊານ ແລະ ວຽກສວນຂອງລາວ.

**ຜົນປະໂຫຍດຫຼັກ:** ສະພາບຊີວິດການເປັນຢູ່

**ຜົນປະໂຫຍດພ່ວງ**: ການເຊື່ອມໂຍງກັບພາກພື້ນ

ຄຸນນະພາບຂອງສິ່ງແວດລ້ອມ

**<u>ທ່ານ ບຸນຈັນ ນັນທະວົງ - ກຳມະກອນຮັບຈ້າງ</u>**

*ກຳມະກອນເພດຊາຍ ຈາກພາກໃຕ້ຂອງປະເທດລາວ*

ທ່ານ ບຸນຈັນ ນັນທະວົງ ຍ້າຍມາຈາກແຂວງໃກ້ຄຽງເພື່ອມາເຮັດວຽກຢູ່ກຸ່ມບ້ານຫຼືເຂດທີ່ມີການປູກກາເຟໃນພາກໃຕ້ຂອງປະເທດລາວ. ລາວມາຮັບຈ້າງລາຍວັນຕາມໜ້າວຽກທີ່ຊາວສວນກາເຟຜູ້ທີ່ມີເນື້ອທີ່ກວ້າງ ແລະ ບໍລິສັດຕ່າງປະເທດ ຕ້ອງການ ເຊັ່ນ: ເສຍຫຍ້າ, ໃສ່ຝຸ່ນ, ເກັບກາເຟ. ວ່າດ້ວຍຄ່າແຮງງານຂອງນາຍຈ້າງ, ສ່ວນໃຫຍ່ຊາວສວນກາເຟ(ຜູ້ເປັນນາຍຈ້າງ) ນອກຈາກຈະຈ່າຍຄ່າແຮງງານສູງກວ່າ ຄ່າຈ້າງຂອງບໍລິສັດ ພວກເຂົາຍັງມີອາຫານໃຫ້ກິນໃຫ້ແຮງງານຮັບຈ້າງ. ແຕ່ເນື່ອງຈາກວ່າຄ່າແຮງງານແມ່ນອີງໃສ່ນໍ້າໜັກໝາກກາເຟທີ່ເກັບ, ສະນັ້ນ ການຮັບຈ້າງເກັບກາເຟຢູ່ສວນຂອງບໍລິສັດຈະຫາເງິນໄດ້ຫຼາຍກວ່າ ເພາະສວນກາເຟຂອງບໍລິສັດແມ່ນເປັນສວນຂະໜາດໃຫຍ່ແລະມີໝາກກາເຟຫຼາຍກວ່າສວນຂອງປະຊາຊົນ. ເພາະສະນັ້ນ, ໂດຍລວມການຮັບຈ້າງເກັບກາເຟໃນສວນຂອງບໍລິສັດຈະຫາເງິນໄດ້ຫຼາຍກວ່າສວນປະຊາຊົນ.

ໄລຍະເວລາຮັບຈ້າງ, ທ່ານ ບຸນຈັນ ນັນທະວົງ ອາໄສຢູ່ຮ່ວມກັບກຳມະກອນທີ່ມາຈາກຕ່າງແຂວງ, ພວກເຂົາອາໄສຢູ່ໃນແຄ້ມທີ່ປຸກສ້າງຂຶ້ນເອງຢູ່ເຂດດິນເປົ່າວ່າງໃນບ້ານ ຫລື ດິນວ່າງໃກ້ບ່ອນເຮັດວຽກທີ່ບໍ່ມີໂຄງລ່າງພື້ນດ້ານສຸຂາພິບານ ແລະ ນໍ້າໃຊ້ທີ່ດີ ແລະ ສະອາດ. ອາຫານການກິນທີ່ພວກເຂົາກິນແມ່ນລາຄາຖືກແຕ່ຄຸນຄ່າທາງໂພສະນາການແມ່ນມີໜ້ອຍ, ບາງຄັ້ງນາຍຈ້າງຈັດແຈງອາຫານໃຫ້ກໍຍັງບໍ່ທັນພຽງພໍ. ການຈ້າງງານຂອງ ທ່ານບຸນຈັນທີ່ເປັນແບບລາຍວັນແມ່ນບໍ່ໄດ້ຮັບການຄຸ້ມຄອງທາງດ້ານການປະກັນສັງຄົມ ຫຼື ເງິນບຳນານ ຫຼື ເງື່ອນໄຂການເຮັດວຽກທີ່ເຫມາະສົມ, ແລະ ນາຍຈ້າງບໍ່ໄດ້ອີງໃສ່ກົດລະບຽບຂອງລັດວ່າດ້ວຍການກຳນົດຄ່າແຮງງານຂັ້ນຕໍ່າ. ແນວໃດກໍ່ຕາມ, ລະບຽບການເຫຼົ່ານີ້ຍັງບໍ່ທັນຖືກຈັດຕັ້ງປະຕິບັດໃນຫຼາຍຂົງເຂດ.

ເຖິງວ່າບຸນຈັນຈະເຮັດວຽກໜັກຫຼາຍກໍ່ຕາມ, ແຕ່ລາຍຮັບຂອງລາວກໍຍັງບໍ່ທັນໝັ້ນຄົງ ເພາະມັນຂຶ້ນກັບສະພາບຕະຫຼາດກາເຟ. ລາວມີຄວາມກັງວົນກັບລາຍຮັບທີ່ບໍ່ໝັ້ນຄົງ. ເຖິງແມ່ນວ່າເມຍຂອງລາວກໍມາຮັບຈ້າງໃນຂະແໜງກາເຟນໍາລາວກ◌ໍຕາມ, ລາວກໍຍັງບໍ່ສາມາດ ຝາກເງິນໃຫ້ຄອບຄົວໄດ້. ລາວຄິດຮອດລູກໆຂອງລາວຫຼາຍຊຶ່ງພວກເຂົາຢູ່ກັບພໍ່ເຖົ້າແມ່ເຖົ້າ ເພາະລາວຈະກັບບ້ານກໍຕໍ່ເມື່ອລະດູເກັບກ່ຽວໝາກກາເຟສິ້ນສຸດລົງ.

**ຜົນປະໂຫຍດຫຼັກ:** ສະພາບຊີວິດການເປັນຢູ່

**ຜົນປະໂຫຍດພ່ວງ**: ແຮງດຶງດູດທາງດ້ານເສດຖະກິດ

ຄວາມອາດສາມາດໃນການຄຸ້ມຄອງຂອງລັດຖະບານ

**ທ່ານ ນາງ ຄໍາສີ ກັນຍາວົງ - ແມ່ຄ້າເກັບຊື້ກາເຟຢູ່ເຂດເມືອງ**

*ແມ່ຄ້າເກັບຊື້ກາເຟ ຈາກພາກໃຕ້ຂອງປະເທດລາວ*

ທ່ານ ນາງ ຄໍາສີ ກັນຍາວົງ ເປັນປະຊາຊົນໃນບ້ານໃດໜຶ່ງຢູ່ພູພຽງບໍລະເວນ, ຊຶ່ງເປັນຜູ້ເກັບຊື້ກາເຟໝາກແດງໃນລາຄາຕໍ່າເທົ່າທີ່ຈະຕໍ່າໄດ້ຈາກຊາວສວນກາເຟໃນຂົງເຂດທ້ອງຖິ່ນນັ້ນ. ຫຼັງຈາກເກັບຊື້ແລ້ວ, ລາວເອົາໄປຂາຍຕໍ່ໃຫ້ບໍລິສັດຕ່າງປະເທດຜູ້ທີ່ແປຮູບໝາກກາເຟ. ການເກັບຊື້ລາວກໍອີງໃສ່ລາຄາເກັບຊື້ຈາກບໍລິສັດ, ຊຶ່ງບໍລິສັດເປັນຜູ້ທີ່ສາມາດປະຕິເສດໃນການຮັບຊື້ໝາກກາເຟຂອງລາວ ແລະ ໄປຊື້ຂອງພໍ່ຄ້າແມ່ຄ້າເກັບຊື້ກາເຟຄົນອື່ນທີ່ມີຄຸນນະພາບກ່ອນ.

ນອກຈາກລາວມີລາຍຮັບຈາກການຄ້າຂາຍກາເຟເປັນລາຍໄດ້ຫຼັກຂອງຄອບຄົວ ແລ້ວລາວຍັງປູກຝັງລ້ຽງສັດແບບກຸ້ມຢູ່ກຸ້ມກິນເປັນອັນເສີມ. ດັ່ງນັ້ນ, ຊີວິດການເປັນຢູ່ຂອງຄອບຄົວລາວຈຶ່ງຂຶ້ນກັບ ຄວາມໝັ້ນຄົງຂອງລາຄາ ແລະ ການຜະລິດ (ຫຼື ຜົນຜະລິດ), ຜົນກໍາໄລສູງ ແລະ ສາຍພົວພັນທາງທຸລະກິດທີ່ດີ. ເມື່ອປຽບທຽບກັບພໍ່ຄ້າ ແລະ ແມ່ຄ້າບ້ານອື່ນ, ຖືວ່າລາວເປັນຜູ້ທີ່ຮັ່ງມີຊຶ່ງລາວສາມາດປ່ອຍເງິນໃຫ້ຊາວສວນກາເຟໃນທ້ອງຖິ່ນຢືມ. ການປ່ອຍກູ້ຢືມເງິນແມ່ນລາວວາງເງື່ອນໄຂ ແລະ ອັດຕາດອກເບ້ຍໃນການໃຫ້ຢືມ. ການປ່ອຍເງິນໃຫ້ຊາວສວນກາເຟຢືມບໍ່ພຽງແຕ່ເປັນລາຍຮັບເສີມ ແຕ່ມັນສ້າງສາຍສໍາພັນການຄ້າລະວ່າງ ຄໍາສີ ແລະ ຊາວສວນກາເຟ. ຄໍາສີຢາກເຮັດການຄ້າຂາຍແບບເອກະລາດເທົ່າທີ່ເປັນໄປໄດ້ໃນການພົວພັນກັບບໍລິສັດ ແລະ ຊາວສວນກາເຟ; ດັ່ງນັ້ນ, ລາວຈະພະຍາຍາມຫຼີກລ່ຽງກົດລະບຽບທີ່ ເຂັ້ມງວດຂອງລັດຖະບານໃນຂະແໜງກາເຟເພື່ອຈະໄດ້ກໍາໄລງາມ. ເຖິງຢ່າງໃດກໍຕາມ, ລາວກໍຍັງສົ່ງເສີມບັນດາວຽກງານທີ່ແນໃສ່ການຮັກສາສິ່ງແວດລ້ອມໃນລະດັບໃດລະດັບໜຶ່ງ, ເພື່ອຮັບປະກັນຜົນຜະລິດກາເຟໃຫ້ມີຄວາມໝັ້ນຄົງ. ເຖິງວ່າລະດັບການສຶກສາຂອງ ນາງ ຄໍາສີ ບໍ່ສູງ, ແຕ່ລາວເປັນຄົນສະຫຼາດ, ເວົ້າເກັ່ງ ແລະ ຮູ້ຈັກການເຈລະຈາຕໍ່ລອງ. ລາວຈະນໍາໜັນ ກ່ຽວກັບຂໍ້ມູນການຊື້ຂາຍ ແລະ ມີເຄືອຄ່າຍໃນການຕິດຕໍ່ພົວພັນກ່ຽວກັບການຊື້ຂາຍ, ຍ້ອນລາວມີປະສົບການ ແລະ ຄວາມຮູ້ຫຼາຍໃນທຸລະກິດການຊື້ຂາຍຈາກຊາວສວນກາເຟ ແລະ ບໍລິສັດຕ່າງປະເທດ.

**ຜົນປະໂຫຍດຫຼັກ:** ແຮງດຶງດູດທາງດ້ານເສດຖະກິດ

**ຜົນປະໂຫຍດພ່ວງ:** ສະພາບຊີວິດການເປັນຢູ່

ຄຸນນະພາບຂອງສິ່ງແວດລ້ອມ

**<u>ທ່ານ ອາສວານ ອັບດູລ - ບໍລິສັດຕ່າງປະເທດ</u>**

*ຕົວແທນນັກທຸລະກິດກະສິກຳເພດຊາຍ ຈາກປະເທດຫວຽດນາມ*

ບໍລິສັດຂອງ ທ່ານ ອາສວານ ອັບດູລ ມີບໍລິສັດສາຂາຫຍ່ອຍຫຼາຍບ່ອນຢູ່ທາງພາກອາຊີຕາເວັນອອກສ່ຽງໃຕ້. ໃນພູພຽງບໍລະເວນ, ບໍລິສັດມີສວນກາເຟທີ່ກວ້າງຂວາງ. ນອກຈາກນັ້ນ ບໍລິສັດກໍຍັງໄດ້ເກັບຊື້ກາເຟໝາກແດງ(ດິບ), ໂດຍສະເພາະກາເຟທີ່ມີຄຸນນະພາບຕ່ຳທີ່ມີລາຄາຖືກ ຈາກພໍ່ຄ້າແມ່ຄ້າ ແລະ ບາງເທື່ອເກັບຊື້ຈາກຊາວສວນກາເຟໂດຍກົງ. ເນື່ອງຈາກພວກເຂົາສາມາດເລືອກຊື້ນຳພໍ່ຄ້າເກັບຊື້ກາເຟ, ເພາະທາງບໍລິສັດມີອຳນາດໃນການເຈລະຈາຕໍ່ລອງລາຄາ. ບໍລິສັດຕ່າງປະເທດ ມີສິ່ງອຳນວຍຄວາມສະດວກ ທີ່ໃຊ້ໃນການແປຮູບກາເຟ ເພື່ອສົ່ງອອກ ແລະ ຄ້າຂາຍກາເຟສູ່ຕະຫຼາດໂລກ. ເພື່ອໃຫ້ບໍລິສັດມີກຳໄລຫຼາຍຂຶ້ນ, ເຂົາເຈົ້າອາໄສເນື້ອທີ່ດິນ, ແຮງງານ ແລະ ການເຂົ້າເປັນສະມາຊິກ ສະມາຄົມກາເຟຂອງຄົນລາວ(CAL) ແລະ ມັກເຮັດທຸລະກິດ ແລະ ອາໄສຢູ່ ສປປ ລາວ. ລາວເຊື່ອໝັ້ນຕໍ່ຜົນປະໂຫຍດໄລຍະຍາວຂອງການປຸກຝັງແບບອຸດສະຫະກຳ ຫຼາຍກວ່າການປູກຝັງຂະໜາດນ້ອຍ, ຈຶ່ງຈະເຮັດໃຫ້ຂະແໜງກາເຟຂອງລາວມີກຳໄລຫຼາຍຂຶ້ນ ແລະ ຊຸກຍູ້ເສດຖະກິດມີການຂະຫຍາຍຕົວ. ລາວຢືນຢັນວ່າທຸກຄົນມີຜົນກຳໄລຈາກຂະແໜງກາເຟ. ເພື່ອເພີ່ມຜົນຜະລິດ, ບໍລິສັດໄດ້ນຳໃຊ້ເຕັກໂນໂລຊີ ແລະ ກຳມະວິທີສານເຄມີ ເຂົ້າຊ່ວຍໃນການປູກກາເຟ. ໃນຊ່ວງລະດູເກັບກ່ຽວ, ບໍລິສັດໄດ້ຈ້າງແຮງງານຮັບຈ້າງຊົ່ວຄາວຈາກບັນດາແຂວງໃກ້ຄຽງເພື່ອເກັບກາເຟ. ທາງບໍລະສັດໄດ້ອະນຸຍາດໃຫ້ແຮງງານຮັບຈ້າງສ້າງແຄ້ມທີ່ພັກຢູ່ທາງຫນ້າສວນກາເຟທີ່ເປັນດິນວ່າງນັ້ນ; ແຕ່, ພວກເຂົາບໍ່ໄດ້ສະຫນອງທີ່ພັກ, ນ້ຳສະອາດ, ຫຼື ສຸຂາພິບານໃຫ້ແຮງງານຮັບຈ້າງ.

ໃນຖານະທີ່ເປັນໜຶ່ງຂອງປະຊາກອນມະນຸດໃນໂລກ, ອາສວານ ຮັກສາສາຍພົວພັນ ກັບນັກລົງທຶນສາກົນ ແລະຜູ້ສະຫນັບສະຫນູນຂອງກາເຟລາວຫຼາຍຄົນ ເຊັ່ນ: ທ່ານ ມາກັສ ຊຳສະເຕັກກຳ ເປັນຫນຶ່ງໃນນັ້ນ. ອາສວານ ແມ່ນຫຼີກລ່ຽງກັບກົດລະບຽບຂອງລັດຖະບານຫຼາຍ, ເພາະວ່າມັນຈະສົ່ງຜົນກະທົບທາງລົບຕໍ່ການດຳເນີນທຸລະກິດຂອງລາວ. ເຖິງຢ່າງໃດກໍຕາມ, ເພື່ອຄວາມຫມັ້ນຄົງທາງດ້ານຕະຫຼາດ, ລາວຈຳເປັນຕ້ອງໄດ້ອາໄສຄວາມອາດສາມາດຂອງລັດຖະບານບາງຢ່າງ ແລະ ດັ່ງນັ້ນບໍລິສັດຕ້ອງໄດ້ສະຫນັບສະຫນູນຊ່ວຍເຫຼືອລັດຖະບານ.

**ຜົນປະໂຫຍດຫຼັກ:** *ແຮງດຶງດູດທາງດ້ານເສດຖະກິດ*

**ຜົນປະໂຫຍດພ່ວງ:** *ການເຊື່ອມໂຍງກັບພາກພື້ນ*

*ຄວາມອາດສາມາດໃນການຄຸ້ມຄອງຂອງລັດຖະບານ*

__ທ່ານ ນາງ ແພງ ສຸກສະຫວັດ - ສະມາຄົມກາເຟ ແຫ່ງ ສປປ ລາວ (ສກລ)__

*ຕົວແທນເພດຍິງຈາກພາກໃຕ້ຂອງລາວ*

*ໃນຖານະທີ່ເປັນຕົວແທນຂອງສະມາຄົມກາເຟແຫ່ງ ສປປ ລາວ (ສກລ), ທ່ານ ນາງ ແພງ ສຸກສະຫວັດ ໄດ້ຮ່ວມ ມືກັບບັນ ດາຜູ້ດຳເນີນງານຂອງຂະແໜງການກາເຟທີ່ມີຄວາມຫຼາກຫຼາຍ, ລວມທັງສະຫະກອນ, ບໍລິສັດຕ່າງປະເທດ ແລະ ພໍ່ຄ້າຊາວ ຂາຍ. ຈຸດປະສົງຂອງ ສກລ ແມ່ນເພື່ອສົ່ງເສີມກາເຟລາວໃນລະດັບສາກົນ ແລະ ສະໜັບສະໜູນຊາວກະສິກອນ, ສະຫະກອນ ແລະ ບໍລິສັດຕ່າງໆໃນການຜະລິດກາເຟທີ່ມີຄຸນນະພາບສູງໃນປະລິມານຫຼາຍ.*

ທ່ານ ນາງ ແພງ ສຸກສະຫວັດ ເປັນຕົວແທນຂອງສະມາຄົມກາເຟແຫ່ງ ສປປ ລາວ (ສກລ) ເຊິ່ງເປັນອົງການທີ່ບໍ່ຫວັງຜົນກຳໄລ ໂດຍປະກອບມີສະມາຊິກໃນຂະແໜງກາເຟຕ່າງໆເຊັ່ນ: ສະຫະກອນ, ບໍລິສັດຕ່າງປະເທດ ແລະ ພໍ່ຄ້າຊາວຂາຍ. ລາວໄດ້ສຶກສາຢູ່ແຂວງຈຳປາສັກ ແລະ ເຮັດວຽກນີ້ເປັນເວລາ 5 ປີ. ພໍ່ແມ່ຂອງລາວເຄີຍປູກກາເຟ, ເຊິ່ງເຮັດລາວນາງມີຄວາມຮູ້ທີ່ກ່ຽວຂ້ອງ ແລະທັນສະໄໝໃນຫຼາຍໆດ້ານຂອງຂະແໜງການ. ສະມາຄົມກາເຟແຫ່ງ ສປປ ລາວ, ບ່ອນທີ່ລາວເຮັດວຽກຢູ່ນັ້ນ, ມີພັນທະໜ້າທີ່ຈາກລັດຖະບານລາວ - ກະຊວງພາຍໃນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ຕະຫຼອດຮອດກະຊວງ ກະສິກຳ ເຊິ່ງມີການຮ່ວມມືຢ່າງໃກ້ຊິດ. ເປົ້າໝາຍຂອງສະມາຄົມ ຄືການສົ່ງເສີມກາເຟລາວ ສູ່ສາກົນ ແລະ ສະໜັບສະໜູນຊາວກະສິກອນ, ສະຫະກອນ ແລະ ບໍລິສັດຕ່າງໆເພື່ອຜະລິດກາເຟ ຄຸນນະພາບສູງໃນປະລິມານຫຼາຍ. ພ້ອມກັນນັ້ນ, ກໍຕ້ອງພະຍາຍາມປົກປັກຮັກສາຄວາມສົມດຸນຂອງສິ່ງແວດລ້ອມໃນຂະນະທີ່ຕ້ອງຮັກສາການເຕີບໂຕທາງດ້ານເສດຖະກິດແບບຍືນຍົງ. ສຳລັບຈຸດປະສົງໃນທີ່ນີ້, ສກລ ປະຕິບັດໜ້າທີ່ປະສານງານກັບອົງການທີ່ກ່ຽວຂ້ອງຂອງລັດຖະບານເພື່ອອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນໃນການດຳເນີນທຸລະກິດໃນຂະແໜງກາເຟ ແລະ ເຮັດວຽກກ່ຽວກັບການຂະຫຍາຍການພົວພັນດ້ານເສດຖະກິດແລະການຄ້າກັບຕ່າງປະເທດ. ຢູ່ພາກໃຕ້ຂອງລາວ, ຈຸດປະສົງແມ່ນແນໃສ່ສ້າງເງື່ອນໄຂໃນການອຳນວຍຄວາມສະດວກໃຫ້ແກ່ການຜະລິດພາຍໃນ ເພື່ອໃຫ້ສາມາດແຂ່ງຂັນກັບຕະຫຼາດສາກົນໄດ້, ດ້ວຍເຫດນີ້ຈຶ່ງໄດ້ເຕົ້າໂຮມ ແລະ ແນະນຳບັນດາສະມາຊິກໃນການຈັດຕັ້ງປະຕິບັດທີ່ດີທີ່ສຸດໃນການດຳເນີນທຸລະກິດ. ທ່ານ ນາງ ແພງ ພະຍາຍາມຮັກສາຄວາມສຳພັນອັນດີກັບບັນດາບໍລິສັດໃຫຍ່ໆ ເພື່ອຮັບປະກັນຄຸນນະພາບຂອງສິນຄ້າສົ່ງອອກ – ກໍຄືຊື່ສຽງຂອງຂະແໜງກາເຟທັງໝົດໃນລາວ. ບໍລິສັດຂະໜາດໃຫຍ່ຍັງເປັນຄູ່ຮ່ວມງານທີ່ສຳຄັນສຳລັບ ສກລ ເພື່ອສະໜອງການຝຶກອົບຮົມແລະອຸປະກອນໃຫ້ແກ່ຊາວກະສິກອນເພື່ອເພີ່ມຄຸນນະພາບແລະປະລິມານຂອງກາເຟຂອງພວກເຂົາ.

ຜົນປະໂຫຍດຫຼັກ: *ຄວາມອາດສາມາດໃນການຄຸ້ມຄອງຂອງລັດຖະບານ*

ຜົນປະໂຫຍດພ່ວງ: *ແຮງດຶງດູດທາງດ້ານເສດຖະກິດ*

ຄຸນນະພາບຂອງສິ່ງແວດລ້ອມ

**<u>ທ່ານ ສົມຫວັງ ເພັດສະໝອນ - ຫ້ອງວ່າການປົກຄອງເມືອງ</u>**

*ຕົວແທນເພດຊາຍຈາກພາກໃຕ້ຂອງລາວ*

ທ່ານ ສົມຫວັງ ເພັດສະໝອນ ໃນນາມຜູ້ຕາງໜ້າ ທີ່ເຮັດວຽກຢູ່ຫ້ອງວ່າການປົກຄອງເມືອງ, ເຊິ່ງລາວຮັບຜິດຊອບວຽກງານສົ່ງເສີມຂະແໜງກາເຟໃນພາກພື້ນ. ດ້ານໜ້າທີ່ຕຳແໜ່ງຂອງລາວໄດ້ຊຸກຍູ້ໃຫ້ຊາວກະສິກອນໃນທ້ອງຖິ່ນເພີ່ມທະວີຄຸນນະພາບ ແລະ ປະລິມານຂອງກາເຟ, ປະສານສົມທົບການລົງທຶນຂະໜາດໃຫຍ່ໃນຂະແໜງການກາເຟ, ກວດກາຂະບວນການສົ່ງອອກ ແລະ ການຄ້າ ແລະ ການເກັບພາສີ. ໃນຖານະທີ່ເປັນຕົວແທນຂອງລັດຖະບານ, ລາວຕ້ອງໄດ້ປົກປ້ອງຮັກສາຜົນປະໂຫຍດຂອງລັດ, ຫຼຸດຜ່ອນຄວາມທຸກຍາກ, ສົ່ງເສີມຄວາມສະເໝີພາບທາງຍິງ-ຊາຍ, ຊຸກຍູ້ການພັດທະນາເສດຖະກິດໃນພາກພື້ນ. ທ່ານ ສົມຫວັງ ເພັດສະໝອນ ຖືໄດ້ວ່າເປັນຄົນທີ່ມີຄວາມທະເຍີທະຍານ, ເປັນລັດຖະກອນໜຸ່ມຈາກພາກພື້ນ, ຍຶດຖືໜ້າທີ່ຂອງຕົນ ໃນການປະກອບສ່ວນປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃນທ້ອງຖິ່ນ. ໃນການເຮັດວຽກຂອງຕົນ, ທ່ານ ສົມຫວັງ ພະຍາຍາມຮ່ວມມືຢ່າງໃກ້ຊິດກັບຊຸມຊົນທ້ອງຖິ່ນ ແລະ ສະມາຄົມກາເຟແຫ່ງ ສປປ ລາວ (CAL) ເພື່ອຈັດຕັ້ງປະຕິບັດ ແລະ ອຳນວຍຄວາມສະດວກໃຫ້ແກ່ວຽກງານຂອງລັດຖະບານ. ໂດຍຮ່ວມມືກັບ ສະມາຄົມCAL, ລາວພະຍາຍາມທີ່ຈະຮັບປະກັນຄຸນນະພາບ ແລະ ປະລິມານຂອງກາເຟໃນລະດັບທີ່ດີພ້ອມກັບຂະແໜງກະສິກຳໃຫ້ມີຄວາມໝັ້ນຄົງ. ນອກຈາກນັ້ນ, ເປົ້າໝາຍຂອງລາວຄືການ ກະຈາຍລາຍໄດ້ເຫຼົ່ານີ້. ດັ່ງນັ້ນ,ບໍ່ພຽງແຕ່ບໍລິສັດຕ່າງປະເທດທີ່ຈະໄດ້ຮັບຜົນປະໂຫຍດ ຈາກການຂະຫຍາຍຕົວທາງດ້ານການຕະຫຼາດ. ເພື່ອບັນລຸຄວາມມຸ່ງມາດປາດຖະໜາຂອງຕົນ, ທ່ານ ສົມຫວັງ ໄດ້ອີງໃສ່ຄວາມເຂັ້ມແຂງຂອງລັດຖະບານ ຜູ້ທີ່ມີອຳນາດ ແລະ ແຫຼ່ງຊັບພະຍາກອນໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ປະຕິບັດແຜນຍຸດທະສາດຂອງຕົນ. ເນື່ອງຈາກ ລັດຖະບານ ມີງົບປະມານທີ່ຈຳກັດໃນການສະໜັບສະໜູນຜູ້ຜະລິດກາເຟ, ທ່ານ ສົມຫວັງ ຈຶ່ງຊອກຫາການລະ ດົມທຶນຈາກ ແຫຼ່ງອື່ນໆ. ສຳລັບຈຸດປະສົງໃນນີ້, ລາວເຮັດວຽກໃນການສ້າງຄວາມສຳພັນອັນດີກັບພາກສ່ວນກ່ຽວຂ້ອງອື່ນໆ ເຊັ່ນ: ອົງການ NGO ສາກົນ, ໜ່ວຍງານຂອງລັດຖະບານຕ່າງຊາດແລະບໍລິສັດຕ່າງໆ.

ຜົນປະໂຫຍດຫຼັກ: *ຄວາມອາດສາມາດໃນການຄຸ້ມຄອງຂອງລັດຖະບານ*

ຜົນປະໂຫຍດພ່ວງ: *ສະພາບຊີວິດການເປັນຢູ່*

ການເຊື່ອມໂຍງກັບພາກພື້ນ

## <u>ທ່ານ ບຸນທົງ ພົງຈະເລີນ - ສະຫະກອນທ້ອງຖິ່ນ</u>

*ຕົວແທນເພດຊາຍຈາກພາກໃຕ້ຂອງລາວ*

ທ່ານ ບຸນທົງ ພົງຈະເລີນ ເປັນຜູ້ຈັດການຂອງສະຫະກອນທ້ອງຖິ່ນ, ເຊິ່ງເປັນສະມາຄົມຂອງຊາວສວນໃນທ້ອງຖິ່ນ, ເປັນທັງຜູ້ທີ່ຜະລິດ ແລະ ເຮັດການຕະຫຼາດໃຫ້ແກ່ກາເຟຂອງພວກເຂົາ ຫຼື ຢ່າງໜ້ອຍກໍແມ່ນສ່ວນໜຶ່ງ ໂດຍຜ່ານສະຫະກອນ. ໃນການຕັ້ງເປົ້າໝາຍເພື່ອປັບປຸງສະພາບການເປັນຢູ່ຂອງຊາວກະສວນໃນທ້ອງຖິ່ນ, ສະຫະກອນພະຍາຍາມປົກປັກຮັກສາ ສິ່ງແວດລ້ອມເພື່ອໃຫ້ເປັນພື້ນຖານແກ່ການດຳລົງຊີວິດຂອງຊາວສວນ ແລະ ສະໜອງຊ່ອງທາງການຕະຫຼາດແບບທາງເລືອກ ແລະ ແບບປອດສານພິດໃຫ້ແກ່ຊາວສວນ. ທ່ານ ບຸນທົງ ພົງຈະເລີນ ເປັນຄົນທີ່ມີຫົວຄິດປະດິດສ້າງ, ຢາກປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນທ້ອງຖິ່ນຂອງຕົນ. ເພື່ອຈຸດໝາຍດັ່ງກ່າວ, ຍາມໃດລາວກໍ່ຊອກຫາວິທີການຜະລິດໃໝ່ໆເພື່ອສະໜັບສະໜູນຊາວສວນຜູ້ຜະລິດກາເຟປອດສານພິດ. ສະຫະກອນໄດ້ກຳນົດມາດຕະຖານຂັ້ນສູງສຳລັບການຜະລິດກາເຟ. ສິ່ງເສີມການຜະລິດແບບປອດສານພິດ, ສະມາຊິກຂອງຕົນແມ່ນບໍ່ຖືກອະນຸຍາດໃຫ້ນຳໃຊ້ສານເຄມີເຊັ່ນ: ຝຸ່ນສັງເຄາະ, ຢາຂ້າຫຍ້າ, ແລະຢາຂ້າແມງໄມ້ ໃນສວນກາເຟຂອງພວກເຂົາ. ທ່ານ ບຸນທົງ ແລະ ສະມາຊິກສະຫະກອນຄົນອື່ນໆ ພະຍາຍາມຊອກຫາຝຸ່ນຊີວະພາບທີ່ເໝາະສົມ, ເພື່ອຮັບປະກັນປະລິມານກາເຟທີ່ມີຄຸນນະພາບດີ. ນີ້ກໍ່ແມ່ນສິ່ງສຳຄັນເພື່ອຮັກສາສະຖຽນລະພາບດ້ານເສດຖະກິດຂອງ ຊາວສວນກາເຟທີ່ເປັນສະມາຊິກຂອງສະຫະກອນ. ໂດຍໄດ້ຮັບການສະໜັບສະໜູນຈາກອົງການ NGO “ການຄ້າເປັນທຳເພື່ອຄວາມຍືນຍົງ” ແລະ ອົງການ NGOs ອື່ນໆ, ທ່ານ ບຸນທົງ ສາມາດສະໜອງການເຂົ້າເຖິງຕະຫຼາດປອດສານພິດ, ການຄ້າທີ່ເປັນທຳໃນທະວີບເອີຣົບ, ເຊິ່ງສາມາດສະໜອງການ ຮັບປະກັນລາຄາ ທີ່ສູງກວ່າກາເຟທົ່ວໄປໃຫ້ແກ່ຊາວສວນ. ເຖິງຢ່າງໃດກໍຕາມ, ມັນຍາກທີ່ສະຫະກອນຈະສະໜອງລາຄາທີ່ດີທີ່ສຸດໃຫ້ແກ່ຊາວສວນຢ່າງຕໍ່ເນື່ອງ ແລະ ການຊຳລະເງິນຄ່າກາເຟໃຫ້ຄົບໝົດຕາມປະລິມານກາເຟຂອງຊາວສວນແມ່ນສາມາດຈ່າຍໄດ້ງວດດຽວ ຫຼື 2 ງວດຕໍ່ປີ. ໃນຂັ້ນລັດຖະບານ, ທ່ານ ບຸນທົງ ຕາງໜ້າໃຫ້ບັນດາສະມາຊິກສະຫະກອນ ພາຍໃນອົງການປະສານງານຂອງລະບົບຕ່ອງໂສ້ການສະໜອງກາເຟຂອງລາວໃນລະດັບພາຍໃນ ແລະ ຕ່າງປະເທດ. ສະຫະກອນແມ່ນອີງໃສ່ການສະໜັບສະໜູນຂອງລັດຖະບານ, ຕົວຢ່າງເຊັ່ນ: ໃນຮູບແບບລະບຽບການດ້ານການຕະຫຼາດ - ຖ້າບໍ່ດັ່ງນັ້ນ ມັນກໍຈະເປັນການຍາກສຳລັບສະຫະກອນທີ່ຈະຢູ່ຮ່ວມກັນຄຽງຄູ່ກັບບັນດານັກທຸລະກິດທີ່ໃຫຍ່ກວ່າ. ໂດຍສ່ວນຫຼາຍແລ້ວ, ທ່ານ ບຸນທົງ ມີຄວາມມັກຮັກໃນວຽກ ຂອງລາວ ;ແນວໃດກໍ່ຕາມ, ບາງຄັ້ງລາວກໍ່ຮູ້ສຶກອຸກອັ່ງເພາະຄວາມສົນໃຈ ຂອງຊາວສວນຕໍ່ກັບການເຮັດວຽກຂອງສະຫະກອນແມ່ນບໍ່ສູງ, ການໄດ້ຮັບສະມາຊິກໃຫມ່ແມ່ນເປັນວຽກທີ່ຕ້ອງໃຊ້ເວລາ.

ຜົນປະໂຫຍດຫຼັກ: ຄຸນນະພາບຂອງສິ່ງແວດລ້ອມ

ຜົນປະໂຫຍດພ່ວງ: *ສະພາບຊີວິດການເປັນຢູ່*

*ຄວາມອາດສາມາດໃນການຄຸ້ມຄອງຂອງລັດຖະບານ*

## <u>ທ່ານ ມາກັສ ຊໍາສະເຕັກ - ຜູ້ໃຈບຸນດ້ານສິ່ງແວດລ້ອມ</u>

*ຜູ້ໃຫ້ທຶນໃນການສົ່ງເສີມ ແລະ ອານຸຮັກສິ່ງແວດລ້ອມ*

ທ່ານ ມາກັສ ຊໍາສະເຕັກ ເປັນນັກທຸລະກິດທີ່ປະສົບຜົນສໍາເລັດທີ່ສ້າງລາຍຮັບຫຼາຍປີ ເຊິ່ງຕອນນີ້ລາວຕ້ອງການມຸ່ງເປົ້າໝາຍຂອງລາວໄປສູ່ການເຮັດສິ່ງທີ່ດີ. ລາວເຊື່ອໝັ້ນວ່າການເຊື່ອມໂຍງທຸລະກິດຂອງລາວສາມາດຊ່ວຍສົ່ງເສີມການພັດທະນາ ແລະ ລາວກໍເປັນຜູ້ສະຫນັບສະຫນູນທີ່ມີຄວາມເຂັ້ມແຂງໃນການສ້າງເສດຖະກິດສີຂຽວ. ວິທີການນີ້ສົ່ງເສີມການລົງທຶນຂອງລັດ ແລະ ເອກະຊົນ ເຂົ້າໃນກິດຈະກໍາທາງເສດຖະກິດ, ພື້ນຖານໂຄງລ່າງ ແລະ ຊັບສິນ ທີ່ຊ່ວຍກະຕຸ້ນການຂະຫຍາຍຕົວ ແລະ ສາມາດນໍາໄປສູ່ການຫຼຸດຜ່ອນການປ່ອຍອາຍພິດກາກໂບນິກ ແລະ ມົນລະພິດ, ປັບປຸງປະສິດທິພາບພະລັງງານ ແລະ ຊັບພະຍາກອນ, ຫຼຸດຜ່ອນການສູນເສຍຂອງຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ລະບົບນິເວດ.

ທ່ານ ມາກັສ ຊໍາສະເຕັກ ມີຄວາມຮັກໃນອາຊີຕາເວັນອອກສ່ຽງໃຕ້ ແລະ ໃຊ້ເວລາຫຼາຍເດືອນຕໍ່ປີຢູ່ໃນພາກພື້ນ, ບ່ອນທີ່ລາວໄດ້ດໍາເນີນໂຄງການຕ່າງໆທີ່ສົ່ງເສີມຄວາມຍືນຍົງດ້ານສິ່ງແວດລ້ອມແລະການພັດທະນາເສດຖະກິດຂອງພາກພື້ນ. ລາວເຫັນວ່າມີ ທ່າແຮງຫຼາຍດ້ານໃນການຜະລິດກາເຟທີ່ເປັນມິດກັບສິ່ງແວດລ້ອມເພື່ອການເຕີບໂຕທາງດ້ານເສດຖະກິດທີ່ໝັ້ນຄົງ ແລະ ຍືນຍົງໃນປະເທດລາວ ແລະ ລາວເຊື່ອວ່າສາມາດສົ່ງເສີມໄດ້ໂດຍຜ່ານການຮ່ວມມືກັນຂ້າມຊາດ. ກໍເພາະວ່າ ທ່ານ ມາກັສເຫັນວ່າປະເທດສະວິສເຊີແລນເປັນຕະຫຼາດທີ່ມີຄວາມເປັນໄປໄດ້ສໍາລັບຜະລິດຕະພັນກາເຟ ທີ່ເປັນມິດກັບສິ່ງແວດລ້ອມ. ລາວເຮັດວຽກກັບລັດຖະບານລາວ, ສະມາຄົມCAL, ແລະບໍລິສັດຕ່າງປະເທດ ໂດຍພະຍາຍາມຊັກຊວນໃຫ້ເຂົາເຈົ້າປະຕິບັດຕາມແນວທາງເສດຖະກິດສີຂຽວ. ຢ່າງໃດກໍ່ຕາມ, ນີ້ແມ່ນການປະຕິບັດງານທີ່ຫຍຸ້ງຍາກ - ບໍລິສັດຕ່າງປະເທດເບິ່ງຄືວ່າບໍ່ມີ ຄວາມສົນໃຈຫຼາຍປານໃດໃນການປະຕິບັດກ່ຽວກັບເຕັກໂນໂລຊີດ້ານນິເວດວິທະຍາແບບໃຫມ່, ເວັ້ນເສຍແຕ່ວ່າພວກເຂົາມີ ຄວາມສົນໃຈດ້ານການລົງທຶນທາງດ້ານເສດຖະກິດທີ່ເຫັນຜົນທັນທີ. ໃນນີ້, ເຫັນວ່າສະຫະກອນທີ່ ທ່ານ ບຸນທົງ ເຮັດວຽກຖືວ່າເປັນຄູ່ຮ່ວມງານທີ່ດີ ແລະ ມີຄຸນຄ່າຫຼາຍກວ່າ.

ຜົນປະໂຫຍດຫຼັກ: ຄຸນນະພາບຂອງສິ່ງແວດລ້ອມ

ຜົນປະໂຫຍດພ່ວງ: *ແຮງດຶງດູດທາງດ້ານເສດຖະກິດ*<br>ການເຊື່ອມໂຍງກັບພາກພື້ນ

**<u>ທ່ານ ເຣເນີ/ເຣີນເນ ເມເອຍ - ອົງການ NGO ຂອງປະເທດ</u>ສະວິສເຊີແລນ <u>"ການຄ້າເປັນທຳເພື່ອຄວາມຍືນຍົງ"</u>**

*ຕົວແທນອົງການ NGO ເພດຊາຍຈາກປະເທດສະວິດ*

ທ່ານ **<u>ເຣເນີ/ເຣີນເນ</u>** ເມເອຍ ມີອາຍຸ 50 ປີ, ເຮັດວຽກໃຫ້ອົງການ NGO ຂອງປະເທດສະວິສເຊີແລນ "ການຄ້າເປັນທຳເພື່ອຄວາມຍືນຍົງ". ລາວເຕີບໃຫຍ່ຢູ່ໃນຟາມໃນປະເທດສະວິສເຊີແລນ, ລາວໄດ້ສຶກສາຢູ່ມະຫາ ວິທະຍາໄລແລະຫຼັງຈາກນັ້ນກໍໄດ້ເຂົ້າເຮັດວຽກກັບອົງການ NGO. ລາວມີປະສົບການມາເປັນເວລາດົນນານທາງດ້ານຕ່ອງໂສ້ມູນຄ່າການກະສິກຳແບບຍືນຍົງ.ທ່ານ **<u>ເຣເນີ/ເຣີນເນ</u>** ເຫັນວ່າຕົນເອງເປັນທັງຜູ້ນຳທາງເພື່ອເຮັດໃຫ້ມີການປ່ຽນແປງທາງດ້ານການເມືອງ ຫຼື ສັງຄົມ ແລະ ເປັນທັງຜູ້ປະຕິບັດຕົວຈິງໃຫ້ເກີດຜົນຢ່າງແທ້ຈິງ, ຜູ້ທີ່ຕໍ່ສູ້ເພື່ອສິດທິຂອງ ຊາວກະສິ ກອນຂະໜາດນ້ອຍ, ແຕ່ກໍຍັງເປັນຜູ້ທີ່ຄິດວ່າມັນເປັນສິ່ງສຳຄັນທີ່ຈະຕ້ອງມີອົງກອນຂະໜາດໃຫຍ່ເຂົ້າຮ່ວມໃນຂະບວນການເພື່ອການປ່ຽນແປງແບບຍືນຍົງ. ທ່ານ ເຣເນີ/ເຣີນເນໄດ້ເຂົ້າມາປະເທດລາວເປັນເວລາຫຼາຍປີແລ້ວ. ລາວຮູ້ຈັກຕະຫຼາດ ແລະ ພາກສ່ວນກ່ຽວຂ້ອງຂອງລາວດີ ແລະ ມີຄວາມກະຕືລືລົ້ນຫຼາຍທີ່ຈະມີສະມາຊິກຫຼາຍຂຶ້ນໃນອົງການການຄ້າເປັນທຳ. ທ້າຍທີ່ສຸດແລ້ວ, ລາວຕ້ອງການໃຫ້ຜູ້ຜະລິດ ແລະ ຜູ້ບໍລິໂພກມີກາເຟທີ່ມີຄຸນນະພາບດີ ແລະ ລາວໝັ້ນໃຈໃນຄວາມສຳຄັນຂອງຂະແໜງກາເຟ ທີ່ມີຄວາມແຂງແຮງ ແລະ ໝັ້ນຄົງສຳລັບເປົ້າໝາຍນີ້.

ອົງການ NGO ຂອງປະເທດສະວິສເຊີແລນ "ການຄ້າເປັນທຳເພື່ອຄວາມຍືນຍົງ", ເຊິ່ງທ່ານ **<u>ເຣເນີ/ເຣີນເນ</u>** ເປັນສະມາຊິກກໍ່ຕັ້ງ, ອຸທິດຕົນເພື່ອເພີ່ມທະວີການຮ່ວມມືລະຫວ່າງປະເທດດ້ານຄວາມສະເໝີພາບ ແລະ ການພັດທະນາເສດຖະກິດໃນຂະແໜງກະສິກຳຂອງບັນດາປະເທດກຳລັງພັດທະນາທີ່ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນ. ອົງການນີ້ເຄື່ອນໄຫວຢູ່ໃນບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ທີ່ແຕກຕ່າງກັນ. ຢູ່ໃນລາວ, ອົງການ NGO ນີ້ ສະໜັບສະໜູນລັດຖະບານ ແລະ ຊາວກະສິກອນໃນການສົ່ງເສີມແຜນງານລິເລີ່ມໃນທ້ອງຖິ່ນ ທີ່ແນໃສ່ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃນທ້ອງຖິ່ນດີຂຶ້ນໄປພ້ອມໆກັບການປັບປຸງສະພາບຂອງການຜະລິດກາເຟ. ທັງເປັນຜູ້ສະໜັບສະໜູນທີ່ໜັກແໜ້ນໃນການສົ່ງເສີມແບບຂັ້ນລຸ່ມສູ່ຂັ້ນເທິງ ແລະ ອົງການແບບລວມສູນ. ອົງການ NGO ນີ້ ສະໜັບສະໜູນຊາວສະຫະກອນທ້ອງຖິ່ນໃນການສົ່ງເສີມດ້ານ ການຕະຫຼາດຂອງກາເຟປອດສານພິດ ແລະ ການຄ້າທີ່ເປັນທຳ.

ທ່ານ ທ່ານ **<u>ເຣເນີ/ເຣີນເນ</u>** ເມເອຍ ໄດ້ເຫັນເຖິງບົດບາດຂອງລາວໃນການເສີມສ້າງສາຍພົວພັນລະຫວ່າງຜູ້ດຳເນີນງານ ຕ່າງຊາດ ແລະ ມີສ່ວນຮ່ວມຫຼາຍໃນຮູບແບບການຮ່ວມມືສ່ວນບຸກຄົນນີ້. ໂດຍການມີສ່ວນຮ່ວມຂອງລາວ, ລາວປາກສ້າງສາຍພົວພັນດ້ານການຄ້າທີ່ເປັນທຳຢູ່ໃນທ້ອງຖິ່ນລະຫວ່າງປະເທດສະວິສເຊີແລນ ແລະ ປະເທດລາວ.

ຜົນປະໂຫຍດຫຼັກ: *ການເຊື່ອມໂຍງກັບພາກພື້ນ*

ຜົນປະໂຫຍດພ່ວງ: *ແຮງດຶງດູດທາງດ້ານເສດຖະກິດ*

*ສະພາບຊີວິດການເປັນຢູ່*

**<u>ທ່ານ ນາງ ດໍຣ່າ ສະເນເດີ - ຫ້ອງການເພື່ອການພັດທະນາສາກົນປະເທດສະວິສເຊີແລນໃນລາວ</u>**

*ຕົວແທນເພດຍິງຈາກສະວິສເຊີແລນ*

ເປັນເວລາສີ່ປີແລ້ວທີ່ ທ່ານ ນາງ ດໍຣ່າ ສະເນເດີ ໄດ້ເຮັດວຽກໃຫ້ຫ້ອງການເພື່ອການພັດທະນາສາກົນຂອງປະເທດສະວິສເຊີແລນ(SOD). ລາວໄດ້ສຶກສາການພົວພັນສາກົນທີ່ປະເທດສະວິສເຊີແລນແລະໄດ້ຍ້າຍໄປຢູ່ປະເທດລາວປີກາຍນີ້. ລາວມັກການດໍາລົງຊີວິດຢູ່ໃນລາວ ແລະ ກໍ່ຕ້ອງການສ້າງຄວາມແຕກຕ່າງໂດຍອີງຕາມຕໍາແຫນ່ງງານຂອງລາວໃນຖານະທີ່ເປັນຕົວແທນຂອງປະເທດສະວິສເຊີແລນ. ໂດຍເປັນສ່ວນຫນຶ່ງຂອງລັດຖະບານສະວິສເຊີແລນ, ຫ້ອງການເພື່ອການພັດ ທະນາສາກົນຂອງສະວິສເຊີແລນ, ບ່ອນທີ່ທ່ານນາງ ດໍຣ່າ ເຮັດວຽກ, ມີຈຸດປະສົງເພື່ອປະກອບສ່ວນເຂົ້າໃນການ ຄໍ້າປະກັນສະບຽງອາຫານ ແລະ ການເພິ່ງພາຕົນເອງທາງດ້ານເສດຖະກິດຂອງຊາວກະສິກອນຂະຫນາດນ້ອຍ. ພ້ອມທັງສືບຕໍ່ພະຍາຍາມແກ້ໄຂບັນຫາດ້ານສິ່ງແວດລ້ອມ, ບັນຫາການສູນເສຍຊີວະນາໆພັນ ແລະ ພະຍາຍາມປັບປຸງການເຂົ້າເຖິງການສຶກສາ ແລະ ການບໍລິການດ້ານສາທາລະນະສຸກຂັ້ນພື້ນຖານ. ໃນຖານະທີ່ເປັນຕົວແທນຂອງຫ້ອງການ SOD ປະຈໍາລາວ, ພາລະກິດຕົ້ນຕໍຂອງທ່ານນາງ ດໍຣ່າ ສະເນເດີ ຄືການເພີ່ມທະວີການຮ່ວມມື ແລະ ການເຊື່ອມໂຍງລະຫວ່າງປະເທດລາວ ແລະ ປະເທດສະວິສເຊີແລນ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດແຜນງານໃນວາລະປີ 2030. ໃນປະເທດລາວ, ຫ້ອງການ SOD ດໍາເນີນໂຄງການຕ່າງໆທີ່ສະຫນັບສະຫນູນຊາວກະສິກອນຂະຫນາດນ້ອຍເພື່ອຄວາມຫຼາກຫຼາຍຂອງຜະລິດຕະພັນ. ເພື່ອປັບປຸງການນໍາໃຊ້ຄວາມຫຼາກຫຼາຍດ້ານກະສິກໍາແບບຍືນຍົງ ແລະ ໄດ້ຮັບການເຂົ້າເຖິງທີ່ດີຂຶ້ນໃນການເຂົ້າເຖິງທີ່ດິນກະສິກໍາ, ປ່າໄມ້ ແລະ ວິທີການໃນ ການຜະລິດ, ພ້ອມທັງກາຍເປັນຕະຫຼາດທີ່ສາມາດຂາຍຜະລິດຕະພັນໄດ້. ນອກຈາກນີ້, ຫ້ອງການ SOD ຍັງສະໜັບສະໜູນການຮ່ວມມືການສຶກສາຄົ້ນຄວ້າລາວ-ສະວິສເຊີແລນ ເພື່ອໃຫ້ມີຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບວິທີການໃນການສະໜັບສະໜູນປະຊາຊົນ ໃນເຂດຊົນນະບົດໃຫ້ດີທີ່ສຸດໃນການດໍາລົງຊີວິດແບບຍືນຍົງ. ສໍາລັບພາລະກິດ ຂອງທ່ານ ນາງ ດໍຣ່າ ກໍຄືການເຮັດວຽກ ຢ່າງໃກ້ຊິດກັບຫ້ອງການລັດຖະບານສະວິສເຊີແລນແລະລາວ. ເຖິງຢ່າງໃດກໍ່ຕາມ, ລາວຍັງມີຄວາມສົນໃຈໃນສິ່ງທີ່ອົງການ NGO ແລະ ນັກລົງທຶນຢູ່ໃນພາກພື້ນໄດ້ກ່າວເຖິງ ແລະ ບ່ອນທີ່ພວກເຂົາຕ້ອງການການສະຫນັບສະຫນູນ.

ຜົນປະໂຫຍດຫຼັກ: *ການເຊື່ອມໂຍງກັບພາກພື້ນ*

ຜົນປະໂຫຍດພ່ວງ: *ຄຸນນະພາບຂອງສິ່ງແວດລ້ອມ*

*ຄວາມອາດສາມາດໃນການຄຸ້ມຄອງຂອງລັດຖະບານ*